ການອອກຈຳໜ່າຍຮຸ້ນກູ້ຄັ້ງທຳອິດໃນລາວ

ອີກໜຶ່ງບາດກ້າວອັນສຳຄັນ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໃນການເປີດການຊື້ ຂາຍຮຸ້ນກູ້ຄັ້ງທຳ ອິດ ຊຶ່ງມີມູນຄ່າຮຸ້ນກູ້ 3 ລ້ານໂດລາສະຫະລັດ ຫຼື ປະມານ 51,6 ຕື້ກີບ, ມູນຄ່າກຳນົດ 50 ພັນໂດລາສະຫະລັດ ຕໍ່ໜ່ ວຍ, ອັດຕາດອກເບ້ຍ 7,50% ຕໍ່ປີ ແລະ ມີອາຍຸຮຸ້ນກູ້ 4 ປີ.

ໂດຍໃນຕອນເຊົ້າຂອງວັນທີ 09 ມິຖຸນາ 2023 ໄດ້ຈັດພິທີເປີດການຊື້ ຂາຍຮຸ້ນກູ້ຄັ້ງທຳອິດ ຂອງບໍລິສັດ ສຸ ວັນນີ ໂຮມເຊັນເຕີ ມະຫາຊົນ ໃນຕະຫຼາດຫຼັກຊັບລາວ ຂຶ້ນຢ່າງເປັນທາງການ ຢູ່ທີ່ຫ້ອງປະຊຸມໃຫຍ່ຊັ້ນ 8 ຕຶກຕະຫຼາດ ຫຼັກຊັບລາວ. ພິທີໃນຄັ້ງນີ້ໄດ້ຮັບກຽດເຂົ້າຮ່ວມ ແລະ ເປັນສັກຄີພະຍານໂດຍ ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ ວ່າການ ທະນາຄານແຫ່ງ ສປປ ລາວ. ພ້ອມກັນນັ້ນ, ກໍໄດ້ຮັບກຽດຂຶ້ນມີຄຳເຫັນ ແລະ ເປີດພິທີ ໂດຍ ທ່ານ ສຸພັກ ຖິ່ນ ໄຊພອນ ຜູ້ອຳນວຍໃຫຍ່ຕະຫຼາດຫຼັກຊັບລາວ ແລະ ທ່ານ ສົມຈິດ ອິນທະມິດ ປະທານສະພາຜູ້ບໍລິຫານ ບໍລິສັດ ສຸ ວັນນີ ໂຮມເຊັນເຕີ ມະຫາຊົນ. ນອກຈາກນີ້, ຍັງປະກອບມີຕາງໜ້າຈາກບັນດາກົມກອງທີ່ກ່ຽວຂ້ອງຂອງທະນາຄານ ແຫ່ງ ສປປ ລາວ, ອົງການຈັດຕັ້ງສາກົນ, ບໍລິສັດຫຼັກຊັບ, ບໍລິສັດກວດສອບພາຍນອກ, ບັນດາທະນາຄານທຸລະກິດ ແລະ ຫົວໜ່ວຍວິສະຫະກິດທີ່ມີທ່າແຮງໃນການລະດົມທຶນ, ແຂກທີ່ຮັບເຊີນ ແລະ ສື່ມວນຊົນ ເຂົ້າຮ່ວມຢ່າງ ພ້ອມພຽງ.

ຈຸດປະສົງໃນການຈັດພິທີໃນຄັ້ງນີ້ແມ່ນເພື່ອໃຫ້ບັນດາຫົວໜ່ວຍວິສະຫະກິດ ແລະ ມວນຊົນໄດ້ຮັບຊາບຜົນ ສຳເລັດໃນການລະດົມທຶນດ້ວຍການອອກຈຳໜ່າຍຮຸ້ນກູ້ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ພ້ອມນັ້ນ, ກໍ່ເພື່ອຊຸກຍູ້ ແລະ ສົ່ງເສີມການລົງທຶນ ແລະ ການລະດົມທຶນດ້ວຍການອອກຈຳໜ່ າຍຮຸ້ນກູ້ ແລະ ຈົດທະບຽນໃນ ຕະຫຼາດຫຼັກຊັບລາວກໍ່ຄືການພັດທະນາຕະຫຼາດຮຸ້ນກູ້ຂອງ ສປປ ລາວ ໃຫ້ເຕີບໃຫຍ່ ຂະຫຍາຍຕົວໄປເທື່ອລະກ້າວ.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເປັນບໍລິສັດທີ່ດຳເນີນທຸລະກິດ ຄ່ຽງຄູ່ກັບການເຕີບໃຫ່ຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມຂອງ ສປປ ລາວ ມາເປັນເວລາຍາວນານ ບໍລິສັດສ້າງຕັ້ງຂຶ້ນໃນປີ 1988 , ໄດ້ສະເໜີ ອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 25 ລ້ານຮຸ້ນ ແລະ ໄດ້ເຂົ້າຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ໃນວັນທີ 11 ທັນວາ 2015 ດ້ວຍທຶນຈົດທະບຽນທັງໝົດ 330 ຕື້ກີບ ຊຶ່ງດຳເນີນທຸລະກິດຈັດຈຳ ໜ່າຍສິນຄ້າວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານແບບຄົບວົງຈອນ.

ອີງໃສ່ຄວາມຮຽກຮ້ອງຂອງທຸລະກິດໃນເງື່ອນໄຂໃໝ່ ແລະ ເພື່ອເສີມສ້າງຄວາມເຕີບໃຫ່ຍ, ເຂັ້ມແຂງ ແລະ ການພັດທະນາແບບຍືນຍົງຂອງທຸລະກິດ, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ລະດົມທຶນດ້ວຍການອອກຈຳໜ່ າຍຮຸ້ນກູ້ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວເປັນຄັ້ງທຳອິດ ຊຶ່ງມີມູນຄ່າຮຸ້ນກູ້ 3 ລ້ານໂດລາສະຫະລັດ ຫຼື ປະມານ 51,6 ຕື້ກີບ, ມູນຄ່າກຳນົດ 50 ພັນໂດລາສະຫະລັດ ຕໍ່ໜ່ວຍ, ອັດຕາດອກເບ້ຍ 7,50% ຕໍ່ປີ ແລະ ມີອາຍຸ ຮຸ້ນກູ້ 4 ປີ. ຊຶ່ງພິທີເປີດການຊື້ ຂາຍຮຸ້ນກູ້ຄັ້ງທຳອິດ ໃນຄັ້ງນີ້ ແມ່ນເປັນຂີດໝາຍອັນສຳຄັນ ຕໍ່ກັບ ບໍລິສັດ ສຸວັນນີ ໂຮມ ເຊັນເຕີ ມະຫາຊົນ ແລະ ຕະຫຼາດຫຼັກຊັບລາວ ຊຶ່ງສະທ້ອນໃຫ້ເຫັນເຖິງຄວາມຮຽກຮ້ອງຕ້ອງການ, ຄວາມເຊື່ອໝັ້ນ ແລະ ທ່າແຮງ ໃນການພັດທະນາຕະຫຼາດຮຸ້ນກູ້ຢູ່ ສປປ ລາວ. ພາຍໃນພິທີ, ບໍລິສັດ ສຸວັນນີ ໄດ້ລົງນາມເຊັນສັນຍາວ່າ

ດ້ວຍການຈົດທະບຽນຮຸ້ນກູ້ຮ່ວມກັບຕະຫຼາດຫຼັກຊັບລາວ ແລະ ຍັງໄດ້ມີການຕັ້ງບູທຈາກບໍລິສັດຫຼັກຊັບ ເພື່ອເປີດບັນຊີຫຼັກຊັບ ແລະ ໃຫ້ຄຳປຶກສາແກ່ບໍລິສັດທີ່ສົນໃຈລະດົມທຶນຜ່ານຕະຫຼາດທຶນລາວພາຍໃນງານອີກດ້ວຍ.

ພິທີເປີດການຊື້ ຂາຍຮຸ້ນກູ້ ຂອງບໍລິສັດ ສຸວັນນີ ໃນຄັ້ງນີ້ ຖືເປັນນິມິດໝາຍອັນສຳຄັນ ແລະ ເປັນໃບໜ້າໃໝ່ ໃຫ້ແກ່ ຕະຫຼາດທຶນລາວ ເນື່ອງຈາກ ບໍລິສັດ ສຸວັນນີ ເປັນບໍລິສັດທຳອິດທີ່ສຳເລັດການອອກຈຳໜ່າຍຮຸ້ນກູ້ໃນ ສປປ ລາວ ແລະ ເຂົ້າຈົດທະບຽນໃນ ຕະຫຼາດຫຼັກຊັບລາວ.

ສຸວັນນີ ໂຮມເຊັນເຕີ ຈິນຕະນາການທີ່ເປັນໄປໄດ້

